ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ເລກທີ: 356 /ຫກສ.ກຄຖ

ນະຄອນຫຼວງວຽງຈັນ, ວັນທີ ໒໙ ມິຖຸນາ ໒໐໒໑

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ເລື່ອງ:** ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸກະຈາຍສຽງລະບົບ Short Wave, AM, FM, ໂທລະພາບ ອານາລັອກ (Analogue) ແລະ ໂທລະພາບ ດີຈີຕອນ (Digital).

- ອີງຕາມ ກົດໝາຍ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ສະບັບເລກທີ 654/ປທສ, ລົງວັນທີ 28 ມີນາ 2016.

ຫ້ອງການ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ຖືກຕ້ອງກັບກົດໝາຍຄື້ນຄວາມຖີ່ວິທະຍຸສື່ສານ ແລະ ລະບຽບການ, ພ້ອມທັງຮັບປະກັນການນຳໃຊ້ຄື້ນຄວາມຖີ່ໃຫ້ມີປະສິດທິພາບສູງສຸດ, ປ້ອງກັນຄື້ນຄວາມຖີ່ລົບກວນ ແລະ ສອດຄ່ອງກັບລະບຽບສາກົນທີ່ ສປປ ລາວ ເປັນພາຄີ, ສະນັ້ນຈຶ່ງແຈ້ງມາຍັງທ່ານ ເພື່ອຂໍຮ້ອງມາຂຶ້ນທະບຽນນຳໃຊ້ຄື້ນຄວາມຖີ່ວິທະຍຸກະຈາຍສຽງລະບົບ Short Wave, AM, FM, ໂທລະພາບ ອານາລັອກ (Analogue) ແລະ ໂທລະພາບ ດີຈີຕອນ (Digital) ນຳກົມຄື້ນຄວາມຖີ່, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ສຳລັບບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ຄື້ນຄວາມຖີ່ວິທະຍຸກະຈາຍສຽງລະບົບ Short Wave, AM, FM, ໂທລະພາບ ອານາລັອກ (Analogue) ແລະ ໂທລະພາບ ດີຈີຕອນ (Digital) ທີ່ມີສະຖານີຕັ້ງຢູ່ຕ່າງແຂວງ ແມ່ນສາມາດພົວພັນພະແນກເຕັກໂນໂລຊີ ແລະ ການສື່ສານ ຂອງແຂວງຕົນ ເພື່ອອຳນວຍຄວາມສະດວກໃນການປະສານງານຂໍຂຶ້ນທະບຽນນຳກົມຄື້ນຄວາມຖີ່, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພາຍໃນໄລຍະເວລາ 03 ເດືອນ ນັບແຕ່ມື້ອອກແຈ້ງການສະບັບນີ້. ຖ້າບໍ່ມາຂຶ້ນທະບຽນ ເວລາກວດພົບເຫັນຈະຖືກກ່າວເຕືອນ, ປັບໃໝ ຕາມກໍລະນີໜັກ ຫຼື ເບົາ ດັ່ງທີ່ໄດ້ລະບຸໄວ້ໃນໝວດທີ 13 ຂອງກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.

ຮ.ກ ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ວະລະໄຊ ດາລາລອຍ

<u>ປະສານງານ:</u>

ກົມຄື້ນຄວາມຖີ່ 021 833 006

1. ນາງ ເພັດສະພອນ ແກ້ວວົງສາ 020 2201 1882